# ວອນເຈົ້າແມ່ສີເມືອງ

ສິບນີ້ຍົກໃສ່ເກົ້າ    ເທົ້າຫຽບເຖິງສຽນ
ຂ້າຂໍຮຽນຜູ້ນາມເຮືອງ    ພຣະແມ່ສີເມືອງໄທ້
ຂ້າເຄີຍອະທິຖານໄວ້    ຕອນໄປລາວເພື່ອຢ້ຽມຍາດ
ປາດຖນາຮັກໝັ້ນ    ຊີວັນຊິ້ນເມື່ອລຸນ

ຊີວິດຂ້າງໜ້າພຸ້ນ    ກາຍລ່ວງລາລັບ
ກັບໄປເຖິງຕອນປາຍ    ສິ່ງທີ່ໝາຍເອົາໄວ້
ຂໍໃຫ້ສຸກໃຈສ້າງ    ໃນທາງທັມພຸທສາດ
ປາດຖນາພອນເລີດລ້ຳ    ພຣະທັມແກ້ວເພິ່ນສັ່ງສອນ

ໃນເມື່ອຊີວິດຂ້ອນ    ໂລກາອ່ວຍໝູນໄປ
ເວລາໄວບໍ່ຫວນກັບ    ພັບຊົ່ວຕາຊະລາແລ້ວ
ສ່ວນວ່າແນວນາມເຊື້ອ    ເໜືອໃກໃຕ້ລຸ່ມ
ເປັນຊາວພຸທຈິ່ງຕ່ອມຕຸ້ມ    ລຸມກັນເຂົ້າຈັ່ງແມ່ນລາວ

ນາງຂໍກ່າວບ່ອນບັ້ນ    ກະສັດທ່ານທີ່ນຳມາ
ຟ້າງຸ່ມອົງສັດທາໃສ    ຊື່ນພຣະທັຍທັມແກ້ວ
ນຳເອົາແວວວາວກ້າ    ສາສນາເຂົ້າມາຢູ່
ຄູ່ຄຽງລາວຈິ່ງສືບສ້າງ    ແຕ່ປາງນັ້ນຜ່ານມາ

ພຣະອົງເປັນເຈົ້າຟ້າ    ສັດທາສິ່ງທາງທັມ

ນຳຈາກເມືອງຂເມນມາ　　ຖິ່ນພຣະຊາຍາແກ້ວ
ພຣະທັຍແວວວາວເຫຼື້ອມ　　ໃສໃນພຸທສາດ
ປວງຊົນຊາດກໍຮັກຫມັ້ນ　　ຊາວລາວນັ້ນເຊື່ອພຣະທັມ

ສາທຸ ຂໍໃຫ້ບຸນຊ່ວຍຄ້ຳ　　ນຳສິ່ງຊາວພຸທ
ຈຸດໃດເຮົາຫມາຍເຖິງ　　ເພິ່ງພຣະທັມຈິ່ງນຳຍູ້
ບັນດາຄຣູຈິ່ງຫາຍຮ້ອນ　　ອາຈານສອນຈິ່ງສິດຊື່ນ
ອາຍຸຍືນຕຣາບຊົ່ວເທົ້າ　　ຈົນເຖົ້າແກ່ການ ພຸ້ນເຍີ

ໂດຍ ສາວຫຼັກເຈັດ